# ວິທີໃຫ້ເຂົ້າເຖິງ ຄົນໃຫ້ ຫຼາຍຂຶ້ນ ໃນສື່ສັງຄົມ ອອນລາຍ

ການສ້າງເນື້ອໃນທີ່ຄົນຈະມັກ



**ເຈົ້າຕ້ອງການຢາກໃຫ້ມີຜູ້ກົດ ມັກ (Like), ໃຫ້ຄວາມເຫັນ (Comment) ແລະ ແບ່ງປັນ (Share) ຫຼາຍຂຶ້ນໃນການສົ່ງໃສ່ໜ້າສື່ສັງຄົມອອນລາຍຂອງເຈົ້າບໍ?**

ບັນດາໜ້າຕໍ່ໄປນີ້ຈະມີເຄັດລັບທີ່ຈະເຮັດໃຫ້ ການສົ່ງ (Post) ຂອງເຈົ້າໄດ້ຮັບຄວາມສົນໃຈ.

**ຈຸດສຳຄັນ:**

- ວິດີໂອ
- ຄວາມເປັນຕົວຕົນແທ້ຈິງ
- ການມີສ່ວນຮ່ວມ
- ການກວດສອບປະສິດທິພາບຂອງການ





# ເປັນຈິງ, ຕົວຕົນແທ້ ແລະ ມັນກະຕຸ້ນ ໃຫ້ມີການສົນທະນາ

- ໃຊ້ນ້ຳສຽງທີ່ເປັນມິດ, ຄືກັນກັບກຳລັງລົມກັບໝູ່ເພື່ອນ.
- ຈຳກັດຂໍ້ຄວາມໃຫ້ສັ້ນປະມານບໍ່ໃຫ້ກາຍ 100 ຕົວອັກສອນ. ໃຊ້ປະໂຫຍກສັ້ນໆ.
- ຖາມຄຳຖາມ ຫຼື ສ້າງໃຫ້ຄົນແບ່ງປັນຄວາມຄິດເຫັນໃນພາບທີ່ສົ່ງຂອງເຮົາ.



## 2 ໃຊ້ແບບສຳຫຼວດ ແລະ ຄຳຖາມ ໃນການສັ່ງພາບເພື່ອໃຫ້ຜູ້ຄົນມີສ່ວນຮ່ວມ ໃນການໂຕ້ຕອບໂອ້ລົມ

- ມັນເປັນສິ່ງທີ່ສະໜຸກ ເພາະຄົນມັກທີ່ຈະເຂົ້າຮ່ວມ.
- ເຊິ່ງມັນມ່ວນຫຼາຍ ເພາະຫຼາຍຄົນມັກທີ່ຈະແບ່ງປັນຄວາມຄິດເຫັນຂອງພວກເຂົາ.



# 3 ໃຊ້ຮູບທີ່ດີໃນການດຶງດູດຄວາມສົນໃຈ

- ຄົນຈະຈື່ຈຳຮູບພາບໄດ້ດີກວ່າຂໍ້ຄວາມລ້ວນໆພຽງຢ່າງດຽວ.
- ການສົ່ງທີ່ມີຮູບພາບທີ່ສະດຸດຕາມັກຈະໄດ້ຍອດ Like, Share ແລະ Comment ຫຼາຍກວ່າສົ່ງແບບຂໍ້ຄວາມ.
- ຮູບທີ່ດີຈະໂດດເດັ່ນໃນຟີດທີ່ມີຄົນຊົມຫຼາຍໃນການສົ່ງ. ຄົນອາດຈະຢຸດເລື່ອນ ແລະ ເບິ່ງພາບທີ່ສົ່ງນັ້ນຂອງເຈົ້າ.



# 3

ໃຊ້ #Hashtags

**EU Environment**
February 14 at 11:17 AM ·

Happy #ValentinesDay 💚💛🧡❤️💗

Today and everyday, spread love for nature!

Nothing is more attractive than someone who cares #ForOurPlanet.

If you are still looking for the perfect gift for your Valentine - we suggest something with less packaging, recyclable and from the heart.

Here's how to identify the most sustainable products 🎁👉 https://europa.eu/!YqXDT9

#valentines #love



68 · 1 comment · 21 shares

ອີໂມຈິ

ປະໂຫຍກງ່າຍໆ, ມີຍະ ວ່າງລະຫວ່າງ ປະໂຫຍກ

ຊັກຊວນໃຫ້ຄົນປະຕິບັດ: ຫລຸດການໃຊ້ ການຫໍ່ສິນຄ້າໃຫ້ ໜ້ອຍລົງເພື່ອປົກປ້ອງ ສິ່ງແວດລ້ອມ

ຮູບພາບທີ່ໂດດເດັ່ນ

# 4 ໃຊ້ວິດີໂອເພື່ອດຶງຄວາມສົນໃຈ

- ວິດີໂອເປັນເນື້ອໃນທີ່ໄດ້ຮັບຄວາມນິຍົມທີ່ສຸດ ໃນສື່ສັງຄົມອອນລາຍ.
- ຮູບແບບສື່ສັງຄົມອອນລາຍມັກໃຫ້ຄວາມສຳຄັນ ກັບເນື້ອໃນທີ່ເປັນວິດີໂອ.
- ວິດີໂອສາມາດອະທິບາຍເລື່ອງທີ່ຊັບຊ້ອນສະພາບ ພູມອາກາດ ແລະ ສິ່ງແວດລ້ອມໄດ້ງ່າຍກວ່າຂໍ້ຄວາມ.




ເບິ່ງເພີ່ມຕື່ມໃນບົດຮຽນ 3.5

## 5 ໂພສເປັນປະຈຳ ແລະ ຕາມເວລາທີ່ເໝາະສົມ

- ບັນຊີທີ່ສົ່ງສະເໜີເປັນປະຈຳຈະໄດ້ຮັບຄວາມສົນໃຈ ຫຼາຍກວ່າ ແລະ ຈະຖືກຈື່ຈຳໃນໃຈຜູ້ໃຊ້.
- ສຶກສາເວລາເບິ່ງທີ່ຜູ້ຕິດຕາມຂອງເຈົ້າໃຊ້ Facebook ຫຼາຍແລ້ວສົ່ງໃສ່ໃນເວລານັ້ນ.
- ເວລາສົ່ງໃສ່ (ໂພສ) ອາດຈະແຕກຕ່າງກັນອອກໄປ, ແຕ່ພາກເຊົ້າໆ ແລະ ໃນມື້ເຮັດວຽກມັກເປັນເວລາທີ່ດີ.



## 6 ຕອບສະໜອງ ແລະ ຕອບກັບຕໍ່ຜູ້ຕິດຕາມຂອງເຈົ້າ

- ຖ້າມີຄົນສະແດງຄວາມຄິດເຫັນຕໍ່ຂອງເຈົ້າ, ຕ້ອງຕອບກັບ!
- ມັນສະແດງໃຫ້ເຫັນວ່າເຈົ້າກຳລັງຟັງ ແລະ ໃຫ້ຄວາມສົນໃຈພວກເຂົາເຈົ້າຢູ່
- ມັນຈະຊ່ວຍສ້າງຊຸມຊົນອ້ອມຮອບເນື້ອໃນຂອງເຈົ້າ.



# 7 ກວດເບິ່ງວ່າການສັ່ງຂອງເຈົ້າ ມີ ປະສິດທິພາບແນວໃດ

- ເບິ່ງເຄື່ອງມືວິເຄາະຂໍ້ມູນຂອງ ແພລດຟອມ (Platform) ຕົວຢ່າງ: Insights ໃນ Facebook ຫຼື Instagram.
- ເບິ່ງວ່າສິ່ງໃດທີ່ໄດ້ຜົນດີທີ່ສຸດ ແລະ ເຮັດມັນໃຫ້ຫຼາຍຂຶ້ນ!
- ຖາມຜູ້ຕິດຕາມຂອງເຈົ້າວ່າ ພວກເຂົາມັກເນື້ອໃນແບບໃດ.



ຕອນນີ້ ໄປສ້າງວິດີໂອທີ່
ສຸດຍອດສົ່ງໄດ້ເລີຍ!